ຈາກຫົວໃຈຂອງພວກເຮົາຊາວຄຣູຫຼັກເຈັດ
ເຖິງອ້າຍ ກຸໃລ

ອ້າຍກຸໃລເອີຍ !
ຄໍາກອນອ້າຍຊາບຊຶ້ງ ດຶງດູດຊາວຫຼັກເຈັດ
ເມັດນ້ຳຕາເຮົາລິນໄຫຼ ໄດ້ນັ່ງຟັງກອນອ້າຍ
ບັນລະຍາຍເປັນຂໍ້ ພຽງພໍທຸກໆທີ່
ອະດີດເຮົາຄາວກ່ອນກີ້ ເຖິງວັນນີ້ແມ່ນບໍ່ລືມ ດອກນາ

ບັນດາຄຣູເຮົາປາບປື້ມ ເຫັນອ້າຍສົ່ງສານມາ
ພັນລະນາເປັນຄໍາກອນ ທຸກບ່ອນມອງເຫັນແຈ້ງ
ຈຶ່ງເປັນແຮງໃຈໃຫ້ ພວກເຮົາພູມໃຈຫຼາຍ ເຖິງວ່າອ້າຍບໍ່ໄດ້ຮ່ວມ
ທຸກຄົນລວມຢູ່ທີ່ນີ້ ມີໃຈຍ້ອນສົ່ງມາ ອ້າຍເອີຍ

ອ້າຍກຸໄລ!!
ອ້າຍຢູ່ສຸດຂອບຟ້າ ເມືອງຝຣັ່ງແສນໄກ
ຍັງຝາກໃຈເຖິງຊາວຄຣູ ຄູ່ຄໍາກອນອ້າຍ
ຄຣູອາຈານກໍຫຼາຍຫນ້າ ທັງບັນດາແຂກທຸກທ່ານ
ຄົນໃນງານໄດ້ນັ່ງໃຫ້ ຄໍາກອນອ້າຍໃຫ້ຫ່ວງຫຼັງ ແທ້ນໍ

ລົມຊື່ນາມອ້າຍຕັ້ງ ອິງຮັງທາດອິງສັກສິດ
ຊວນໃຫ້ເຮົາທຸກຄົນຄິດ ຢາກກາບອິງເຈດີເຄົ້າ
ບ່ອນພຣະສິທທັດຖະເຈົ້າ ຊິງພຣະທັມເນົານັ່ງ
ທາດອິງຮັງເພິ່ນຈຶ່ງຕັ້ງ ນາມໄວ້ແຕ່ນານ

ຂໍໃຫ້ທຸກໆທ້ານ ຄອບຄົວທ່ານກຸໃລ

ຈຶ່ງໄດ້ຄອງຄວາມສຸກ ທຸກຢ່າມີມາໃກ້

ອົດໃຈລໍວັນຫນ້າ ເວລາດີອີກຄັ້ງໃຫມ່

ສະມາຄົມຊາວຄຣູ ເຮົາຕ້ອງເກີດຂື້ໄດ້ ໃນວັນນັ້ນຈຶ່ງພົບກັນ ອ້າຍເອີຍ

ໂດຍ ສາວຫຼັກເຈັດ